# ທີ່ຕັ້ງ



ທະນາຄານແຫ່ງ ສປປ ລາວ ພາກເໜືອ ທີ່ແຂວງອຸດົມໄຊ

ຖະໜົນ 13 ເໜືອ, ບ້ານວັງໄຮ,ເມືອງໄຊ,ແຂວງອຸດົມໄຊ, ສປປ ລາວ

ໂທລະສັບ: (856-81) 260012,260013,260015 ແຟັກ:(856-81) 260009,212550

Email: somvixayls@bol.gov.la

# ພາລະບົດບາດ

ທະນາຄານແຫ່ງ ສປປ ລາວພາກເໜືອທີ່ແຂວງ ອຸດົມໄຊ ແມ່ນໜຶ່ງໃນກົງຈັກການຈັດຕັ້ງຂອງ ທະນາຄານແຫ່ງ ສປປ ລາວ, ທາງດ້ານວິຊາການ ແລະ ການຈັດຕັ້ງພະນັກງານແມ່ນຂຶ້ນກັບການຄຸ້ມຄອງຂອງ ທະນາຄານແຫ່ງ ສປປ ລາວ, ສ່ວນທາງດ້ານການເມືອງ-ແນວຄິດ ແລະ ການເຄື່ອນໄຫວວຽກງານຂອງອົງການຈັດຕັ້ງມະຫາຊົນ ແມ່ນຂຶ້ນກັບ ອຳນາດການປົກຄອງທ້ອງຖິ່ນທີ່ສັງກັດຢູ່.

ທະນາຄານ ແຫ່ງ ສປປ ລາວ ພາກເໜືອ ທີ່ແຂວງອຸດົມໄຊເປັນເສນາທິການໃຫ້ແກ່ຄະນະຜູ້ວ່າການທະນາຄານ ແຫ່ງ ສປປ ລາວ ໃນການຄຸ້ມຄອງມະຫາພາກທາງດ້ານເງິນຕາ, ສິນເຊື່ອຢູ່ໃນຂົງເຂດແຂວງອຸດົມໄຊ,ຜົ້ງສາລີ,ຫຼວງນໍ້າທາ ແລະ ບໍ່ແກ້ວ,ພ້ອມທັງເປັນທີ່ປຶກສາທາງດ້ານການເງິນ-ເງິນຕາ, ສິນເຊື່ອໃຫ້ແກ່ຄະນະພັກ ແລະ ອຳນາດການປົກຄອງທ້ອງຖິ່ນທີ່ຕົນຮັບຜິດຊອບ ແລະ ເປັນຜູ້ປະສານງານກັບອຳນາດການປົກຄອງທ້ອງຖິ່ນ ເພື່ອຈັດຕັ້ງປະຕິບັດໜ້າທີ່ສິ່ງເສີມ ແລະ ປົກປັກຮັກສາສະຖຽນລະພາບຂອງເງິນກີບ, ຍົກສູງປະສິດທິພາບກົນໄກຊຳລະໜີ້ ແລະ ຖານະການຊຳ ລະໜີ້ຂອງບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນ ທີ່ຕັ້ງຢູ່ທ້ອງຖິ່ນຕົນຮັບຜິດຊອບຕາມນະໂຍບາຍທີ່ທະນາຄານແຫ່ງ ສປປ ລາວ ວາງອອກ ແລະ ອຳນວຍຄວມຄຸມການເຄື່ອນໄຫວເງິນຕາຕາມນະໂຍບາຍທີ່ ທະນາຄານແຫ່ງ ສປປ ລາວ ວາງອອກເພື່ອຮັບໃຊ້ແຜນພັດທະນາເສດຖະກິດ-ສັງຄົມຂອງທ້ອງຖິ່ນທີ່ຕົນຮັບຜິດຊອບໃຫ້ຂະ ຫຍາຍຕົວ.